ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ

ກອງທຶນສົ່ງເສີມການຜະລິດສິນຄ້າລາວ

ເລກທີ..0020../ກສລ

ນະຄອນຫຼວງວຽງຈັນ, ວັນທີ..18..ມິຖຸນາ 2026

# ປະກາດຮັບສະໝັກພະນັກງານຕຳແໜ່ງຜູ້ຊ່ວຍວຽກສິນເຊື່ອ

1. ກອງທຶນສົ່ງເສີມການຜະລິດສິນຄ້າລາວ (ກສລ), ກະຊວງອຸດສາຫະກຳ ແລະ ການຄ້າ ມີແຜນຈັດຈ້າງພະນັກງານຕາມສັນຍາຕຳ ແໜ່ງຜູ້ຊ່ວຍວຽກສິນເຊື່ອ **01 ຕຳແໜ່ງ** ປະຈຳຢູ່ ກສລ;

2. **ໜ້າທີ່ ແລະ ຄວາມຮັບຜິດຊອບ (TOR) ມີຄືດັ່ງລຸ່ມນີ້:**
   - ຄົ້ນຄວ້າສ້າງຮູບແບບ ແລະ ກົນໄກການສະໜອງສິນເຊື່ອ ຂອງ ກສລ ຕາມນະໂຍບາຍຂອງລັດຖະບານ;
   - ຕິດຕາມ-ປະເມີນຜົນ ແລະ ລາຍງານຂໍ້ມູນການສະໜອງສິນເຊື່ອ ຂອງ ກສລ ໃນແຕ່ລະໄລຍະ;
   - ຄົ້ນຄວ້າ ແລະ ປະເມີນຄວາມສ່ຽງໃນການປ່ອຍທຶນໃຫ້ແກ່ ສະມາຄົມ, ກຸ່ມ, ສະຫະກອນ ແລະ ຫົວໜ່ວຍການຜະລິດໂດຍກົງ ຕາມການສະເໜີ ໂດຍສອດຄ່ອງກັບລະບຽບທີ່ໄດ້ວາງອອກ;
   - ຄົ້ນຄວ້າບັນດານິຕິກຳຕ່າງໆ ທີ່ກ່ຽວຂ້ອງກັບຂະແໜງສິນເຊື່ອຂອງ ກສລ ໃນແຕ່ລະໄລຍະ;
   - ເຜີຍແຜ່ ແນະນຳກ່ຽວກັບການສະໜອງສິນເຊື່ອ ແລະ ຮູບແບບບ້ວງທຶນຕ່າງໆ ຂອງ ກສລ ຜ່ານຂະແໜງການເງິນຕ່າງໆ;
   - ຕິດຕາມການຊຳລະດອກເບ້ຍ ແລະ ຕົ້ນທຶນ;
   - ປະຕິບັດວຽກງານອື່ນໆ ຕາມການຊີ້ນຳຂອງຄະນະອຳນວຍການກອງທຶນ.

3. **ເງື່ອນໄຂຂອງ ຜູ້ສະໝັກ ມີລາຍລະອຽດ ດັ່ງລຸ່ມນີ້:**
   - ຈົບການສຶກສາລະດັບປະລິນຍາຕີ ຫຼື ທຽບເທົ່າຂຶ້ນໄປ  ສາຂາການທະນາຄານ, ການເງິນ, ເສດຖະສາດ, ບໍລິຫານທຸລະກິດ, ແລະ ສາຂາອື່ນທີ່ກ່ຽວຂ້ອງ;
   - ມີປະສົບການເຮັດວຽກດ້ານສິນເຊື່ອຈາກສະຖາບັນການເງິນ ຈະຮັບພິຈາລະນາເປັນພິເສດ;
   - ມີຄວາມສາມາດ ດ້ານການຂຽນ ຄົ້ນຄວ້າເອກະສານ, ສ້າງເອກະສານລາຍງານ ແລະ ບົດສະຫຼຸບຕ່າງໆ;
   - ມີຄວາມຫ້າວຫັນໃນການເຮັດວຽກ ແລະ ຄ່ອງຕົວໃນການປະສານງານກັບພາກສ່ວນທີ່ກ່ຽວຂ້ອງ;
   - ສາມາດນຳໃຊ້ຄອມພິວເຕີໄດ້ເປັນຢ່າງດີ (Microsoft Office) ແລະ ອື່ນໆທີ່ຈຳເປັນ;
   - ສາມາດເດີນທາງໄປເຄື່ອນໄຫວວຽກຢູ່ພາຍໃນ ແລະ ຕ່າງປະເທດໄດ້;
   - ມີມະນຸດສຳພັນດີ, ມີທັກສະໃນການສື່ສານ ແລະ ເຈລະຈາດີ.

4. **ເອກະສານສະໝັກປະກອບມີດັ່ງນີ້:**
    - ໃບປະກາດ ແລະ ໃບຄະແນນ;
    - ຊີວະປະຫວັດຜູ້ສະໝັກ (ຄັດຕິດບັດປະຈຳຕົວ);
    - ໃບຢັ້ງຢືນທີ່ຢູ່ (ບໍ່ໃຫ້ກາຍ 03 ເດືອນ);
    - ໃບແຈ້ງໂທດ (ບໍ່ໃຫ້ກາຍ 03 ເດືອນ);
    - ໃບຢັ້ງຢືນສຸຂະພາບ;
    - ໃບຢັ້ງຢືນການຜ່ານງານ (ຖ້າມີ).

5. ເປີດຮັບເອກະສານຜູ້ສະໝັກ ເລີ່ມຕັ້ງແຕ່ວັນທີ **15-29 ມິຖຸນາ 2026** (ໃນໂມງລັດຖະການ **08:30** ໂມງ ຫາ **16:00** ໂມງ, **ວັນຈັນ ເຖິງ ວັນສຸກ**) ຢູ່ທີ່ຊັ້ນ **01**, ຫ້ອງ **102** ຂອງກົມສົ່ງເສີມຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ, ກະຊວງອຸດສາຫະກຳ ແລະ ການຄ້າ, ສຳນັກງານຕັ້ງຢູ່ບ້ານໂພນໄຊ, ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ. ເບີໂທຕິດຕໍ່: 020 22007799, 020 55993366, 020 95639442 ຫຼື ອີເມວ: LPPF2025@gmail.com.

**ຜູ້ອຳນວຍການ**

ນ. ມະນີວອນ ວົງໄຊ